15

0219

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 560 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 31.12.2018.

ກະຊວງ... ເລກທີ 0014 ວັນທີ 04/1/19

# ດຳລັດ
## ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນງົບປະມານ ແຫ່ງລັດ ປະຈຳປີ 2019

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015.
- ອີງຕາມ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປີ 2018 ແລະ ທິດທາງແຜນການປີ 2019 ສະບັບເລກທີ 099/ສພຊ, ລົງວັນທີ 28 ພະຈິກ 2018.
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 9 ເດືອນ, ຄາດຄະເນປະຕິບັດໝົດປີ 2018 ແລະ ແຜນການປະຈຳປີ 2019 ສະບັບເລກທີ 100/ສພຊ, ລົງວັນທີ 28 ພະຈິກ 2018.

ເພື່ອສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດາຈຸດໝາຍລວມ, ເປົ້າໝາຍ ແລະ ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ທັງສືບຕໍ່ພັດທະນາປະເທດ ໃຫ້ໄປຕາມຍຸດທະສາດພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໄລຍະ 10 ປີ (2016-2025) ແລະ ວິໄສທັດຮອດ ປີ 2030 ແນໃສ່ສ້າງບາດລ້ຽວໃໝ່ໃນການພັດທະນາປະເທດ ໃຫ້ກ້າວໄປສູ່ສະຖານະເປັນປະເທດກຳລັງພັດທະນາ ທີ່ມີລາຍຮັບປານກາງສູງ ຕາມທິດເສດຖະກິດ-ສັງຄົມພູມປັນຍາ, ສີຂຽວ ແລະ ຍືນຍົງ ແລະ ສູ່ຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ.

## ນາຍົກລັດຖະມົນຕີ ອອກດຳລັດ:
## ໝວດທີ 1
## ຈຸດປະສົງ, ທິດທາງ-ໜ້າທີ່ລວມ ແລະ ຄາດໝາຍສູ້ຊົນ

### ມາດຕາ 1: ຈຸດປະສົງ
ດຳລັດສະບັບນີ້ ກຳນົດ ທິດທາງ-ໜ້າທີ່ລວມ, ຄາດໝາຍສູ້ຊົນ, ວຽກຈຸດສຸມຕົ້ນຕໍ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນງົບປະມານ ແຫ່ງລັດ ປະຈຳປີ 2019 ໃຫ້ມີປະສິດທິຜົນ ແລະ ບັນລຸຕາມຄາດໝາຍທີ່ວາງໄວ້.

**ມາດຕາ 2: ທິດທາງ-ໜ້າທີ່ລວມ**

ລັດຖະບານ ກຳນົດທິດທາງ-ໜ້າທີ່ລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນງົບປະມານ ແຫ່ງລັດ ປະຈຳປີ 2019 ໂດຍຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ 5 ທິດທາງ-ໜ້າທີ່ລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ດັ່ງນີ້:

1. ສືບຕໍ່ຮັກສາສະຖຽນລະພາບທາງດ້ານການເມືອງ ໃຫ້ໜັກແໜ້ນ; ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ; ເສີມຂະຫຍາຍຄວາມສາມັກຄີປອງດອງ, ພັດທະນາລະບອບປະຊາທິປະໄຕປະຊາຊົນ, ປັບປຸງລະບົບຍຸຕິທຳ ແລະ ສ້າງຄວາມສີວິໄລທາງດ້ານວັດຖຸ ແລະ ຈິດໃຈໃນສັງຄົມລາວໃຫ້ໜັກແໜ້ນ ແລະ ເຂັ້ມແຂງຂຶ້ນໄປເລື້ອຍໆ.

2. ສືບຕໍ່ພັດທະນາເສດຖະກິດແຫ່ງຊາດ ໃຫ້ຂະຫຍາຍຕົວ ຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ມີຄຸນນະພາບ, ຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ແລະ ຊຸກຍູ້ການເຕີບໂຕ ດ້ວຍການຈັດຕັ້ງປະຕິບັດ 8 ມາດຕະການ ຊຸກຍູ້ເສດຖະກິດ ທີ່ສະພາແຫ່ງຊາດຮັບຮອງ ໃຫ້ມີປະສິດທິຜົນ.

3. ສືບຕໍ່ພັດທະນາວັດທະນະທຳ-ສັງຄົມ ໃຫ້ຈະເລີນກ້າວໜ້າ ໂດຍສຸມໃສ່ການຍົກຄຸນນະພາບການພັດທະນາຊັບພະຍາກອນມະນຸດ; ພັດທະນາກຳລັງແຮງງານຂອງຄົນລາວ ໃຫ້ມີສີມື, ມີລະບຽບວິໄນ, ມີຄວາມດຸໝັ່ນ-ອົດທົນ ແລະ ມີຫົວຄິດປະດິດສ້າງ; ພັດທະນາ ແລະ ຍົກລະດັບຄຸນນະພາບ ການບໍລິການສາທາລະນະສຸກ ທັງສ້າງເງື່ອນໄຂ ໃຫ້ພົນລະເມືອງລາວທຸກຄົນ ສາມາດເຂົ້າເຖິງ ການບໍລິການສາທາລະນະສຸກ; ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ມີໝາກຜົນກ່ວາປີຜ່ານມາ; ຟື້ນຟູເຂດຖືກໄພພິບັດ ແລະ ຊ່ວຍເຫຼືອປະຊາຊົນ ທີ່ຖືກກະທົບ ໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ສາມາດກຸ້ມຕົນເອງໂດຍໄວ, ທັງສາມາດເຕີບໃຫຍ່, ເຂັ້ມແຂງ ແລະ ພັດທະນາໄປຕາມທິດທີ່ຍືນຍົງ.

4. ສືບຕໍ່ປົກປັກຮັກສາທຳມະຊາດ ແລະ ພັດທະນາຕາມທິດສີຂຽວ ແລະ ຍືນຍົງ (SDG) ໂດຍເອົາໃຈໃສ່ວຽກງານຮັກສາສິ່ງແວດລ້ອມ, ປ່າໄມ້, ແຫຼ່ງນ້ຳ ແລະ ຊີວະນາໆພັນ; ວຽກງານກວດກາ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ວຽກງານຮັບມືກັບການປ່ຽນແປງດິນຟ້າອາກາດ, ວຽກງານຄາດຄະເນໄພພິບັດທາງທຳມະຊາດ ແລະ ການເຕືອນໄພລ່ວງໜ້າ; ວຽກງານຟື້ນຟູປ່າ ແລະ ເຂດປ່າໄມ້ເສື່ອມໂຊມ; ວຽກງານພັດທະນາ ແລະ ຍົກຄຸນນະພາບ ຂອງສະພາບແວດລ້ອມ ຕົວເມືອງ ແລະ ຊົນນະບົດ ໃຫ້ເປັນສີຂຽວ, ສະອາດ, ສວຍງາມ ແລະ ໜ້າຢູ່.

5. ສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືສາກົນ ຢ່າງເປັນເຈົ້າການ ຕາມທິດທາງ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ; ສືບຕໍ່ຊຸກຍູ້ການເຊື່ອມໂຍງ ແລະ ເຊື່ອມຈອດ ກັບສາກົນ ແລະ ພາກພື້ນ ຢ່າງແຂງແຮງ, ທັງຮັບປະກັນໃຫ້ສອດຄ່ອງກັບແຜນການຕ່າງປະເທດຂອງພັກ ແລະ ເປັນແມ່ແຮງ ຜັກດັນການພັດທະນາປະເທດ ຕາມຍຸດທະສາດ ແລະ ວິໄສທັດ ຂອງການພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ກຳນົດໄວ້.

**ມາດຕາ 3: ຄາດໝາຍສູ້ຊົນ**

1. ລວມຍອດມູນຄ່າຜະລິດຕະພັນພາຍໃນ (GDP) ໃຫ້ເພີ່ມຂຶ້ນໃນອັດຕາ 6,7% ຂຶ້ນໄປ ແລະ ສ້າງມູນຄ່າເພີ່ມຕາມລາຄາໃນປີ ໃຫ້ໄດ້ປະມານ 165.475 ຕື້ກີບ, GDP ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 2.726 ໂດລາສະຫະລັດ, ຄິດໄລ່ເປັນ (GNI) ລາຍໄດ້ແຫ່ງຊາດຈະມີມູນຄ່າ 2.317 ໂດລາສະຫະລັດ. ອັດຕາການເຕີບໂຕ ຂອງຂະແໜງກະສິກຳ ເພີ່ມຂຶ້ນ 2,8%; ກວມເອົາປະມານ 15,3% ຂອງ GDP; ຂະແໜງອຸດສະຫະກຳເພີ່ມຂຶ້ນ 8,3%; ກວມເອົາປະມານ 32,2% ຂອງ GDP; ຂະແໜງການບໍລິການ ເພີ່ມຂຶ້ນ 6,6%; ກວມເອົາປະມານ 41,7% ຂອງ GDP; ພາສີຈາກການນຳເຂົ້າ ເພີ່ມຂຶ້ນ 7,0% ກວມເອົາປະມານ 10,8% ຂອງ GDP.

2. ເສດຖະກິດມະຫາພາກ ມີຄວາມໝັ້ນທ່ຽງ, ຮັກສາອັດຕາເງິນເຟີ້ ບໍ່ໃຫ້ເກີນ 5% ຕໍ່ປີ, ຄວບຄຸມປະລິມານເງິນ (M2) ເພີ່ມຂຶ້ນ ບໍ່ເກີນ 20% ທຽບໃສ່ປີຜ່ານມາ, ຮັບປະກັນຄັງສຳຮອງເງິນຕາຕ່າງປະເທດ ໃຫ້ກຸ້ມການນຳເຂົ້າເກີນ 3 ເດືອນຂຶ້ນໄປ.

3. ລວມຍອດລາຍຮັບງົບປະມານໃຫ້ໄດ້ 26.305,29 ຕື້ກີບ. ໃນນີ້, ລາຍຮັບຈາກການຊ່ວຍເຫຼືອລ້າ: 2.065,29 ຕື້ກີບ, ແລະ ລາຍຮັບພາຍໃນ: 24.240,00 ຕື້ກີບ, ທຽບໃສ່ແຜນ 2018 ເພີ່ມຂຶ້ນ 6,78%.

ລາຍຈ່າຍລວມ ບໍ່ໃຫ້ເກີນ 33.394,07 ຕື້ກີບ. ການຂາດດຸນລວມ ບໍ່ໃຫ້ເກີນ 7.288,78 ຕື້ກີບ ເທົ່າກັບ 4,28% ຂອງ GDP.

4. ການລົງທຶນລວມທັງໝົດ 44.347,30 ຕື້ກີບ ຫຼື ເທົ່າກັບ 26,80% ຂອງ GDP. ໃນນັ້ນ:

4.1 ການລົງທຶນຂອງລັດຈາກງົບປະມານພາຍໃນ 4.359,82 ຕື້ກີບ ກວມເອົາ 9,83% ຂອງທຶນລວມທັງໝົດ (ເທົ່າກັບ 2,63% ຂອງ GDP) ໃນນັ້ນ: ການລົງທຶນບ້ວງສະເພາະ ແລະ ບ້ວງປົກກະຕິລວມທັງໝົດ 2.450 ຕື້ກີບ ກວມເອົາ 56,20%, ຂອງການລົງທຶນຈາກງົບປະມານພາຍໃນ (*ກວມເອົາ 5,52% ຂອງທຶນລວມທັງໝົດ*), ການລົງທຶນຂອງລັດບ້ວງອື່ນໆ ລວມທັງຈິດຮັບຈິດຈ່າຍ 1.909,82 ຕື້ກີບ ກວມເອົາ 43,90% ຂອງການລົງທຶນ (*ກວມເອົາ 4,30% ຂອງທຶນລວມທັງໝົດ*).

4.2 ການລົງທຶນຂອງລັດ ຈາກທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) 7.113,35 ຕື້ກີບກວມເອົາ 16,04% ຂອງທຶນລວມທັງໝົດ (ເທົ່າກັບ 4,29% ຂອງ GDP).

4.3 ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ 23.086,13 ຕື້ກີບ ກວມເອົາ 52,06% ຂອງທຶນລວມທັງໝົດ (ເທົ່າກັບ 13,95% ຂອງ GDP).

4.4 ການລົງທຶນຈາກລະບົບການເງິນ, ເງິນຕາ 9.788 ຕື້ກີບ ກວມເອົາ 22,07% ຂອງທຶນລວມທັງໝົດ (ເທົ່າກັບ 5,91% ຂອງ GDP).

5. ຄາດໝາຍດ້ານການຜະລິດ: ຜະລິດເຂົ້າໃຫ້ໄດ້ປະມານ 4,4 ລ້ານໂຕນ, ກາເຟ 160.000 ໂຕນ, ສາລີອາຫານສັດ 1 ລ້ານໂຕນ, ມັນຕົ້ນ 2,28 ລ້ານໂຕນ, ຊີ້ນ 199.210 ໂຕນ, ໄຂ່ 43.770 ໂຕນ, ປາ 215.000 ໂຕນ, ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ບັນລຸ 12.386 ຕື້ກີບ, ສູ້ຊົນການຜະລິດກະແສໄຟຟ້າໃຫ້ໄດ້ປະມານ 33.874 ລ້ານກິໂລວັດໂມງ, ສູ້ຊົນມູນຄ່າການຜະລິດແຮ່ທາດ ໃຫ້ໄດ້ 11.864 ຕື້ກີບ.

6. ມູນຄ່າຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ບໍລິການ) 64.375 ຕື້ກີບ, ມູນຄ່າການສົ່ງອອກ 5.516 ລ້ານໂດລາສະຫະລັດ, ມູນຄ່າການນຳເຂົ້າ ປະມານ 5.775 ລ້ານໂດລາສະຫະລັດ ແລະ ຂາດດຸນການຄ້າ ປະມານ 259 ລ້ານໂດລາສະຫະລັດ. ດຶງດູດນັກທ່ອງທ່ຽວເຂົ້າມາປະເທດໃຫ້ໄດ້ 4,5 ລ້ານເທື່ອຄົນ, ນຳເງິນຕາເຂົ້າປະເທດ ປະມານ 700 ລ້ານໂດລາສະຫະລັດ.

7. ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາ ໃຫ້ເພີ່ມຈາກ 98,8% ເປັນ 98,9%; ອັດຕາລອດເຫຼືອຮອດ ປໍ 5 ເພີ່ມຈາກ 82,2% ເປັນ 84%, ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ຫຼຸດລົງຍັງເຫຼືອ 20,5% ຂອງປະຊາກອນກຸ່ມເປົ້າໝາຍ, ອັດຕາເດັກລຸ່ມ 5 ປີ ທີ່ມີລວງສູງບໍ່ໄດ້ມາດຕະຖານ ຫຼຸດລົງຍັງເຫຼືອ 32,5% ຂອງປະຊາກອນກຸ່ມເປົ້າໝາຍ, ອັດຕາການຕາຍຂອງແມ່ ຫຼຸດລົງຍັງເຫຼືອ 167/100.000 ຄົນ ຂອງເດັກເກີດມີຊີວິດ, ສູ້ຊົນລຶບລ້າງຄອບຄົວທຸກຍາກ ໃຫ້ໄດ້ 4.649 ຄອບຄົວ, ລຶບລ້າງບ້ານທຸກຍາກ ໃຫ້ໄດ້ 220 ບ້ານ, ສ້າງບ້ານພັດທະນາໃຫ້ໄດ້ 100 ບ້ານ ເພີ່ມຂຶ້ນເປັນ 4.238 ບ້ານໃນທົ່ວປະເທດ ຫລື ເທົ່າກັບ 50,03% ຂອງຈຳນວນບ້ານທັງໝົດ.

## ໝວດທີ 2
## ວຽກຈຸດສຸມຕົ້ນຕໍ

### ມາດຕາ 4: ຂົງເຂດເສດຖະກິດ

1. ສືບຕໍ່ຈັດຕັ້ງປະຕິບັດ 8 ມາດຕະການຊຸກຍູ້ເສດຖະກິດ ໃຫ້ມີປະສິດທິຜົນ ໂດຍເອົາໃຈໃສ່ວຽກງານ ດັ່ງນີ້:

1) ຄຸ້ມຄອງ ແລະ ບໍລິຫານນະໂຍບາຍການເງິນ ແລະ ນະໂຍບາຍເງິນຕາ ຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ເພື່ອຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ, ສະກັດກັ້ນໄພເງິນເຟີ້ ແລະ ຄວບຄຸມອັດຕາແລກປ່ຽນ ໃຫ້ໝັ້ນທ່ຽງ, ພ້ອມທັງ ຄຸ້ມຄອງປະລິມານເງິນ M2, ແກ້ໄຂການຂາດດຸນງົບປະມານ ແລະ ຄຸ້ມຄອງອັດຕາສ່ວນໜີ້ເສຍຂອງລະບົບທະນາຄານ ບໍ່ໃຫ້ເກີນຄາດໝາຍກຳນົດໄວ້.

2) ປັບປຸງສະພາບແວດລ້ອມ ແລະ ອຳນວຍຄວາມສະດວກ ໃນການດຳເນີນທຸລະກິດ ເພື່ອສ້າງບັນຍາກາດໃໝ່ ທີ່ເອື້ອອຳນວຍ ແລະ ສາມາດດຶງດູດ ເອົາການລົງທຶນທີ່ມີຄຸນນະພາບ ເຂົ້າມາພັດທະນາ ແລະ ກະຕຸກຊຸກຍູ້ການເຕີບໂຕຂອງເສດຖະກິດແຫ່ງຊາດ (ໄດ້ອະທິບາຍລະອຽດຕື່ມຢູ່ຂໍ້ 3 ມາດຕາ 4)

3) ກວດກາ ແລະ ສັງລວມຄືນ ໜີ້ສິນຂອງລັດ ໂດຍລວມໜີ້ສິນສາທາລະນະ, ໜີ້ສິນການລົງທຶນຂອງລັດ, ໜີ້ສິນລັດຄ້ຳປະກັນ, ໜີ້ສິນອົງການປົກຄອງທ້ອງຖິ່ນ ແລະ ໜີ້ສິນອື່ນໆ ທີ່ກ່ຽວຂ້ອງ ໃຫ້ເປັນລະບົບ, ຄົບຖ້ວນ ແລະ ຊັດເຈນ ພ້ອມທັງຄົ້ນຄ້ວາ ແລະ ວາງແຜນຄຸ້ມຄອງ ແລະ ແກ້ໄຂໜີ້ສິນ ໃນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຢ່າງເປັນລະບົບ ເພື່ອບໍ່ໃຫ້ກະທົບ ຕໍ່ສະຖຽນລະພາບ ຂອງເສດຖະກິດມະຫາພາກ ກໍຄື ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

4) ປະຕິຮູບການບໍລິຫານຄຸ້ມຄອງການເງິນແຫ່ງລັດ ຕາມແຜນຍຸດທະສາດ ທີ່ລັດຖະບານຮັບຮອງ ໂດຍສຸມໃສ່ວຽກງານຫັນການຄຸ້ມຄອງການເງິນ ໃຫ້ເປັນລະບົບ ແລະ ທັນສະໄໝ ເພື່ອໃຫ້ສາມາດ ເກັບລາຍຮັບ ຈາກຖານລາຍຮັບທີ່ມີຢູ່ແລ້ວ ໃຫ້ມີປະສິດທິຜົນກ່ວາເກົ່າ ທັງສາມາດ ສ້າງໄດ້ຖານລາຍຮັບໃໝ່ໃຫ້ສຳເລັດ, ພ້ອມກັນນີ້, ກໍ່ຄຸ້ມຄອງລາຍຈ່າຍງົບປະມານ ຕາມທິດປະຢັດ ແລະ ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ ທີ່ວາງອອກຢ່າງເຂັ້ມງວດ. ສືບຕໍ່ສົ່ງເສີມການສ້າງລາຍຮັບວິຊາການ ໄປພ້ອມກັບການປັບປຸງກົນໄກນຳໃຊ້ ໃຫ້ຄ່ອງຕົວ ແລະ ມີປະສິດທິຜົນ ຄຽງຄູ່ກັບການຄົ້ນຄ້ວາ ແລະ ຫັນເອົາບາງຫົວໜ່ວຍງົບປະມານ ທີ່ມີເງື່ອນໄຂເໝາະສົມ ເປັນຫົວໜ່ວຍບໍລິຫານວິຊາການກຸ້ມຕົນເອງດ້ານງົບປະມານ ເພື່ອຫລຸດຜ່ອນ ແລະ ຕໍ່ງົບປະມານແຫ່ງລັດ ແລະ ຍົກປະສິດທິພາບ-ປະສິດທິຜົນ ຂອງການບໍລິຫານຄຸ້ມຄອງລັດໃຫ້ດີກວ່າເກົ່າ.

5) ສົ່ງເສີມການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ SME ຕາມແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ (SME) ເຊິ່ງລວມເຖິງການສ້າງກອງທຶນ ໃຫ້ຂະຫຍາຍຕົວ ແລະ ຊຸກຍູ້ການຜະລິດ ແລະ ການບໍລິການພາຍໃນ ທີ່ມີທ່າແຮງ ແລະ ສາມາດແຂ່ງຂັນໄດ້ ແນໃສ່ທົດແທນການນຳເຂົ້າທີ່ບໍ່ຈຳເປັນ, ສົ່ງເສີມການສົ່ງອອກ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດແຫ່ງຊາດ.

6) ດັດສົມປະລິມານໂຄງການລົງທຶນຂອງລັດ ໃຫ້ສອດຄ່ອງກັບຄວາມສາມາດດ້ານງົບມານ; ປັບປຸງໂຄງສ້າງການລົງທຶນໃຫ້ເໝາະສົມ ແນໃສ່ຫຼຸດຜ່ອນການແບກຫາບໜີ້ສິນພາກລັດ ຄຽງຄູ່ກັບການສົ່ງເສີມການລົງທຶນ ດ້ວຍຮູບແບບ BOT ແລະ PPP ທີ່ຮັບປະກັນປະສິດທິພາບ ແລະ ປະສິດທິຜົນທາງດ້ານເສດຖະກິດ ເປັນຕົ້ນໂຄງການກໍ່ສ້າງເຂື່ອນໄຟຟ້າ, ສາຍສົ່ງ, ທາງດ່ວນ, ຂົວ ແລະ ອື່ນໆ ໃຫ້ຫຼາຍຂຶ້ນ.

7) ຈັດສັນ, ຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງກ່ວາເກົ່າ ໂດຍການຫັນການເກັບລາຍຮັບຈາກທີ່ດິນ ໄປສູ່ລະບົບທັນສະໄໝ ເພື່ອເຮັດໃຫ້ລາຍຮັບຈາກການເຊົ່າ, ສຳປະທານ ແລະ ການປະຕິບັດພັນທະອາກອນນຳໃຊ້ທີ່ດິນ ໃຫ້ເພີ່ມຂຶ້ນ.

8) ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດພາສີ, ອາກອນ, ເງິນປັນຜົນ ແລະ ພັນທະທາງດ້ານງົບປະມານຕ່າງໆ ທີ່ມີຕໍ່ລັດ ໃຫ້ຄົບຖ້ວນ ຕາມກົດໝາຍ, ນິຕິກຳລຸ່ມກົດໝາຍ ແລະ ສັນຍາຂອງບັນດາຫົວໜ່ວຍການຈັດຕັ້ງ ທັງພາກລັດ ແລະ ທຸລະກິດ.

2. ຄົ້ນຄວ້າ ແລະ ປັບປຸງ ວິສາຫະກິດລັດ ຢ່າງຈິງຈັງ ໂດຍເຮັດໄປພ້ອມໆກັນ ລະຫວ່າງ ການກຳນົດທິດທາງການສ້າງ ແລະ ພັດທະນາວິສາຫະກິດລັດ ໃນໄລຍະຍາວ ໃຫ້ເຂັ້ມແຂງ ກັບການເລັ່ງປັບປຸງວິສາຫະກິດລັດ ທີ່ມີລັກສະນະຍຸດທະສາດ ທີ່ເປັນເປົ້າໝາຍ ຈຳນວນໜຶ່ງ ທີ່ກຳລັງພົບຄວາມຫຍຸ້ງຍາກ, ຂາດປະສິດທິຜົນທາງເສດຖະກິດ ຫລື ມີຄວາມສ່ຽງຈະລົ້ມລະລາຍ ໂດຍແຕ່ງຕັ້ງຄະນະຮັບຜິດຊອບ, ສ້າງແຜນດຳເນີນງານ ແລະ ກຳນົດເວລາໃນການປັບປຸງ ແຕ່ລະເປົ້າໝາຍໃຫ້ສຳເລັດ ໂດຍພື້ນຖານພາຍໃນ ປີ 2019 ນີ້.

3. ສືບຕໍ່ຈັດຕັ້ງປະຕິບັດ ຄຳສັ່ງເລກທີ່ 02/ນຍ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດ ຢູ່ສປປລາວ ໃຫ້ມີປະສິດທິຜົນໄວຂຶ້ນ ເພື່ອເລັ່ງແກ້ໄຂຄວາມຫຍຸ້ງຍາກຂອງການດຳເນີນທຸລະກິດ ກໍຄືຂອດຄັ່ງຄ້າງຕ່າງໆ ທີ່ຕິດພັນກັບບັນດາຕົວຊີ້ວັດ ຄວາມສະດວກໃນການດຳເນີນທຸລະກິດ ແນໃສ່ເຮັດໃຫ້ອັນດັບຄວາມສະດວກໃນການດຳເນີນທຸລະກິດ ຂອງ ສປປ ລາວ ໃນປີ

2020 ດີຂຶ້ນຢ່າງຈະແຈ້ງ. ມອບໃຫ້ກະຊວງກ່ຽວຂ້ອງເປັນເຈົ້າການແກ້ໄຂສິ່ງກີດຂວາງທີ່ພົວພັນເຖິງ 10 ຕົວຊີ້ວັດ ທີ່ຕ້ອງໄດ້ປັບປຸງໃຫ້ສຳເລັດ ແລະ ເປັນຮູບປະທຳໂດຍໄວ.

4. ຄົ້ນຄວ້າ ແລະ ປັບປຸງ ວິສາຫະກິດລັດ ຢ່າງຈິງຈັງ ໂດຍເຮັດໄປພ້ອມໆກັນ ລະຫວ່າງ ການກຳນົດທິດທາງການສ້າງ ແລະ ພັດທະນາວິສາຫະກິດລັດ ໃນໄລຍະຍາວ ໃຫ້ເຂັ້ມແຂງ ກັບການເລັ່ງປັບປຸງວິສາຫະກິດລັດ ທີ່ມີລັກສະນະຍຸດທະສາດ ທີ່ເປັນເປົ້າໝາຍ ຈຳນວນໜຶ່ງ ທີ່ກຳລັງພົບຄວາມຫຍຸ້ງຍາກ, ຂາດປະສິດທິຜົນທາງເສດຖະກິດ ຫລື ມີຄວາມສ່ຽງຈະລົ້ມລະລາຍ ໂດຍແຕ່ງຕັ້ງຄະນະຮັບຜິດຊອບ, ສ້າງແຜນດຳເນີນງານ ແລະ ກຳນົດເວລາໃນການປັບປຸງ ແຕ່ລະເປົ້າໝາຍໃຫ້ສຳເລັດ ໂດຍພື້ນຖານພາຍໃນ ປີ 2019 ນີ້.

5. ຖອດຖອນບົດຮຽນ ແລະ ປັບປຸງການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຜ່ານປະຕູດຽວ (ຄລທສ ແລະ ຄລທຂ) ໃຫ້ມີປະສິດທິຜົນກວ່າເກົ່າ. ພ້ອມກັນນີ້, ກໍ່ຊຸກຍູ້, ອຳນວຍຄວາມສະດວກ ແລະ ຊ່ວຍເຫລືອພາກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດຢູ່ ສປປ ລາວ ບົນພື້ນຖານນະໂຍບາຍ, ກົດໝາຍ ແລະ ລະບຽບການ ເພື່ອໃຫ້ພາກທຸລະກິດ ສາມາດເຄື່ອນໄຫວ ແລະ ດຳເນີນທຸລະກິດ ຢ່າງຄ່ອງໂຕ ແລະ ມີປະສິດທິຜົນ.

6. ສືບຕໍ່ສົ່ງເສີມການທ່ອງທ່ຽວ ຢ່າງແຂງແຮງ ໂດຍການພັດທະນາ ແລະ ໂຄສະນາແຫລ່ງທ່ອງທ່ຽວທາງດ້ານປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດອັນສວຍງາມ ແລະ ມີຄຸນຄ່າຂອງຊາດ; ສ້າງຈິດສຳນຶກ ແລະ ສົ່ງເສີມການຮັກສາ ແລະ ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າທາງດ້ານວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ແລະ ເປັນເອກະລັກຂອງຊາດ. ແກ້ໄຂລະບຽບການ ແລະ ສິ່ງກີດຂວາງ ທີ່ບໍ່ສອດຄ່ອງກັບນະໂຍບາຍສົ່ງເສີມການທ່ອງທ່ຽວ; ພັດທະນາ ແລະ ຍົກຄຸນນະພາບ ການບໍລິການ ຂອງຂະແໜງບໍລິການທ່ອງທ່ຽວ ເພື່ອດຶງດູດນັກທ່ອງທ່ຽວ ໃຫ້ໄດ້ຫລາຍກ່ວາປີຜ່ານມາ. ນຳໃຊ້ປີທ່ອງທ່ຽວລາວ-ຈີນ ເປັນແມ່ແຮງໜຶ່ງ ໃນການດຶງດູດເອົານັກທ່ອງທ່ຽວ ທາງດ້ານຈຳນວນ ແລະ ຄຸນນະພາບ ໃຫ້ຫຼາຍຂຶ້ນ ເພື່ອເປັນກຳລັງແຮງໃຫ້ແກ່ການຊຸກຍູ້ການຂະຫຍາຍຕົວ ຂອງເສດຖະກິດ.

**ມາດຕາ 5: ຂົງເຂດວັດທະນະທຳ-ສັງຄົມ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ**

1. ເພີ່ມທະວີການສຶກສາອົບຮົມການເມືອງແນວຄິດ, ຕ້ານປະກົດການຫຍໍ້ທໍ້ໃນຫຼຸ້ມແຖວພະນັກງານ, ຄູອາຈານ, ນັກຮຽນ-ນັກສຶກສາ, ນັກທຸລະກິດ ແລະ ປະຊາຊົນ; ປັບປຸງຄຸນນະພາບການສຶກສາໂຄງລ່າງພື້ນຖານ ແລະ ເຄື່ອງມືທີ່ຈຳເປັນ ແລະ ສ້າງໂຮງຮຽນຕົວແບບ ຄູເກັ່ງ-ນັກຮຽນດີ, ມີລະບຽບວິໄນ ແລະ ປາສະຈາກສິ່ງເສບຕິດ.

2. ຍົກລະດັບການບໍລິການດ້ານສາທາລະນະສຸກ ໃຫ້ມີຄຸນນະພາບ, ວ່ອງໄວ, ທັນສະໄໝ ແລະ ໄດ້ຮັບຄວາມໄວ້ວາງໃຈ ຈາກຜູ້ເຂົ້າຮັບການປິ່ນປົວຮັກສາ. ສ້າງໃຫ້ໄດ້ພະນັກງານແພດ, ພະຍາບານທີ່ມີຈັນຍາບັນ, ມີທັດສະນະຮັບໃຊ້ປະຊາຊົນ ແລະ ມີຄວາມຊຳນານ. ສະກັດກັ້ນ ແລະ ປ້ອງກັນບໍ່ໃຫ້ເກີດພະຍາດລະບາດ ແລະ ພະຍາດຕາມລະດູການ. ຈັດຕັ້ງປະຕິບັດ ຍຸດທະສາດແຫ່ງຊາດ ແລະ ປະຕິບັດແຜນງານສຳລັບການບໍລິການ ແບບເຊື່ອມສານ ສຸຂະພາບຈະເລີນພັນ, ແມ່, ເດັກນ້ອຍ ແລະ ຍຸດທະສາດ ໂພສະນາການ ໃຫ້ຂະຫຍາຍກວ້າງຂວາງ ແລະ ທົ່ວເຖິງເຂດຊົນນະບົດ ຫ່າງໄກສອກຫຼີກ.

3. ພັດທະນາສີມືແຮງງານ, ສ້າງວຽກເຮັດງານທຳ, ແກ້ໄຂບັນຫາການຂາດແຄນແຮງງານ, ປັບປຸງຄຸນນະພາບຂອງແຮງງານ, ສືບຕໍ່ປະຕິບັດນະໂຍບາຍສະຫວັດດີການສັງຄົມ ໃຫ້ກວ້າງຂວາງ, ທົ່ວເຖິງ ແລະ ຍຸຕິທຳ ບົນພື້ນຖານນະໂຍບາຍ, ກົດໝາຍ ແລະ ລະບຽບການກຳນົດ. ສືບຕໍ່ວຽກງານເກັບກູ້ລະເບີດ ບໍ່ທັນແຕກໃຫ້ກວ້າງຂວາງ ແລະ ໄວຂຶ້ນ ທັງປ້ອງກັນບໍ່ໃຫ້ປະຊາຊົນຕົກຢູ່ໃນຄວາມສ່ຽງຕໍ່ກັບລະເບີດບໍ່ທັນແຕກ.

4. ຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນ ໃຫ້ໄດ້ຢ່າງໜັກແໜ້ນ ໂດຍສຸມໃສ່ສ້າງບ້ານ, ເມືອງໃຫ້ມີເງື່ອນໄຂບັນລຸມາດຕະຖານພົ້ນທຸກ ແລະ ຊຸກຍູ້, ສົ່ງເສີມການຜະລິດເປັນສິນຄ້າ ແລະ ການຜະລິດກະສິກຳຕາມສັນຍາ ເພື່ອສ້າງລາຍໄດ້ເພີ່ມຂຶ້ນ ໂດຍສະເພາະບັນດາເຂດທີ່ມີອັດຕາສ່ວນຄວາມທຸກຍາກສູງ. ພ້ອມກັນນີ້, ກໍ່ຍາດແຍ່ງການສະໜັບສະໜູນທາງດ້ານທຶນຮອນ ແລະ ວິຊາການຈາກບັນດາປະເທດເພື່ອນມິດພາກພື້ນ ແລະ ສາກົນ ເພື່ອຊ່ວຍໜູນການພັດທະນາຊົນນະບົດ ແລະ

ແກ້ໄຂຄວາມທຸກຍາກ ແນໃສ່ສ້າງພື້ນຖານອັນໜັກແໜ້ນ ເພື່ອໃຫ້ປະເທດຫຼຸດພົ້ນອອກຈາກສະຖານະດ້ອຍພັດທະນາ (LDC).

5. ເລັ່ງປະຕິບັດວຽກງານຊ່ວຍເຫຼືອປະຊາຊົນ ແລະ ຟື້ນຟູເຂດທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ໃນຂອບເຂດທົ່ວປະເທດ ໂດຍເພີ່ມຄວາມເອົາໃຈໃສ່ຕໍ່ເຂດທີ່ໄດ້ຮັບຜົນກະທົບຈາກສັນເຂື່ອນກັ້ນນ້ຳ ເຊປຽນ-ເຊນ້ຳນ້ອຍແຕກ ຢູ່ເມືອງສະໜາມໄຊ, ແຂວງອັດຕະປື ເພື່ອໃຫ້ສາມາດປົວແປງ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ກັບຄືນສູ່ປົກກະຕິໂດຍໄວ ທັງສ້າງເງື່ອນໄຂໃຫ້ປະຊາຊົນຢູ່ເຂດດັ່ງກ່າວສາມາດກຸ້ມຕົນເອງ ແລະ ພັດທະນາຕາມທິດຍືນຍົງສືບຕໍ່ໄປ.

**ມາດຕາ 6: ຂົງເຂດການເຕີບໂຕສີຂຽວ ແລະ ການພັດທະນາແບບຍືນຍົງ**

1. ສືບຕໍ່ຈັດຕັ້ງປະຕິບັດ ຄຳສັ່ງ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້; ພ້ອມກັນນີ້, ກໍ່ປະຕິບັດວຽກງານຟື້ນຟູ ແລະ ປູກທົດແທນປ່າໄມ້ ເພື່ອເພີ່ມພື້ນທີ່ປົກຫຸ້ມ ຂອງປ່າໄມ້ໃຫ້ເພີ່ມຂຶ້ນ ແນໃສ່ບັນລຸຕາມເປົ້າໝາຍເພີ່ມປ່າໄມ້ປົກຫຸ້ມທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII.

2. ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດແຜນຈັດສັນທີ່ດິນແຫ່ງຊາດ ແລະ ອອກນິຕິກຳກ່ຽວຂ້ອງໃນການຄຸ້ມຄອງການນຳໃຊ້ທີ່ດິນໃຫ້ເປັນອັນລະອຽດ; ປັບປຸງສະຖິຕິ ແລະ ຖານຂໍ້ມູນ ໃຫ້ເປັນລະບົບ, ທັນສະໄໝ ແລະ ຊັດເຈນ ເພື່ອເປັນພື້ນຖານ ໃຫ້ແກ່ການວາງແຜນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນໃຫ້ມີປະສິດທິຜົນ; ດຳເນີນການປະເມີນສິ່ງແວດລ້ອມ ສຳລັບບັນດາໂຄງການ ແລະ ກິດຈະກຳ ເພື່ອການພັດທະນາຕາມກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ກ່ຽວກັບການການປົກປັກຮັກສາສິ່ງແວດລ້ອມ.

3. ປັບປຸງລະບົບເຕືອນໄພລ່ວງໜ້າ ໂດຍນຳໃຊ້ເຄື່ອງມືທັນສະໄໝ ໃນການເຝົ້າລະວັງ ແລະ ຕອບໂຕ້ໄພພິບັດໃຫ້ທັນການ ເພື່ອຫຼຸດຜ່ອນຄວາມສ່ຽງ ຫຼື ຜົນກະທົບທີ່ອາດຈະເກີດຂຶ້ນ ຈາກໄພພິບັດໃຫ້ມີປະສິດທິຜົນ.

4. ສືບຕໍ່ຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຢ່າງເປັນເຈົ້າການ ໂດຍສືບຕໍ່ເຊື່ອມສານບັນດາຄາດໝາຍ ແລະ ຕົວຊີ້ວັດຂອງເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງ ແລະ ທ້ອງຖິ່ນ ພ້ອມທັງ ເປັນເຈົ້າການໃນການຈັດຕັ້ງປະຕິບັດເພື່ອຮັບປະກັນໃຫ້ແກ່ການບັນລຸເປົ້າໝາຍທີ່ວາງໄວ້. ພ້ອມກັນນີ້, ກໍ່ຜັນຂະຫຍາຍຍຸດທະສາດການເຕີບໂຕສີຂຽວ ແຫ່ງຊາດ ຂອງ ສປປ ລາວ ເຖິງປີ 2030 (Green Growth) ໃຫ້ເປັນແຜນປະຕິບັດ ຂອງຂະແໜງການ ແລະ ທ້ອງຖິ່ນ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດຕົວຈິງໄດ້ຮັບໝາກຜົນເປັນຢ່າງດີ.

**ມາດຕາ 7: ຂົງເຂດປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ**

1. ເສີມຂະຫຍາຍ ແລະ ຍົກສູງສະຕິວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງປະຊາຊົນບັນດາເຜົ່າ; ເຜີຍແຜ່ສຶກສາອົບຮົມໃຫ້ປະຊາຊົນເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ເພື່ອປຸກລະດົມການມີສ່ວນຮ່ວມ ຂອງປະຊາຊົນເຂົ້າໃນວຽກງານ ປກຊ-ປກສ ທົ່ວປວງຊົນຮອບດ້ານ, ແນໃສ່ສ້າງສັງຄົມໃຫ້ມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢ່າງໜັກແໜ້ນ; ສະກັດກັ້ນ ແລະ ແກ້ໄຂບັນດາປະກົດການຫຍໍ້ທໍ້ທີ່ກີດໜ່ວງກີດຂວາງການພັດທະນາເປັນຕົ້ນ: ບັນຫາຢາເສບຕິດ, ການຄ້າຂາຍເຖື່ອນ, ຂີ້ລັກງັດແງະ ອຸປະຕິເຫດ, ການແບ່ງແຍກຄວາມສາມັກຄີປອງດອງຂອງຊາດ ແລະ ອື່ນໆ.

2. ສືບຕໍ່ທັນລົງກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ສ້າງບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ ຕິດພັນກັບການປະຕິບັດທິດນຳກ່ຽວກັບວຽກງານ ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານໃຫ້ເປັນຫົວໜ່ວຍພັດທະນາ (ວຽກ3ສ້າງ) ໃຫ້ບັນລຸຕາມຄາດໝາຍ; ປົກປັກຮັກສາ, ປ້ອງກັນ ແລະ ແກ້ໄຂບັນຫາຂໍ້ຄົງຄ້າງໃນວຽກງານຊາຍແດນ ເພື່ອສ້າງເຂດຊາຍແດນໃຫ້ເປັນເຂດທີ່ມີແຕ່ສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາ.

**ມາດຕາ 8: ຂົງເຂດການພົວພັນຮ່ວມມືຕ່າງປະເທດ ແລະ ການເຊື່ອມໂຍງສາກົນ**

1. ເປັນເຈົ້າການ ໃນການປະສານສົມທົບກັບອົງການສາກົນ ແລະ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນວຽກງານການຕ່າງປະເທດ ໃຫ້ເຂົ້າສູ່ລວງເລິກ ເພື່ອຍາດແຍ່ງ ເອົາການສະໜັບສະໜູນ, ການຮ່ວມມື ແລະ ການຊ່ວຍເຫຼືອ ເພື່ອເປັນກໍາລັງແຮງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

2. ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມື ແລະ ກິດຈະກໍາການຊ່ວຍເຫຼືອ ຈາກຕ່າງປະເທດ ແລະ ສາກົນ ທີ່ໄດ້ເລີ່ມຈັດຕັ້ງປະຕິບັດ ໃຫ້ດໍາເນີນໄປຕາມມີແຜນການ ແລະ ມີປະສິດຕິຜົນຕາມຄາດໝາຍທີ່ວາງໄວ້.

3. ຄົ້ນຄວ້າ ແລະ ສ້າງໂຄງການ ຫຼື ກິດຈະກໍາການຮ່ວມມື ເພື່ອຜັນຂະຫຍາຍບັນດາສັນຍາ, ບົດບັນທຶກການຮ່ວມມື ແລະ ຂໍ້ຕົກລົງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ແນໃສ່ໝູນໃຊ້ການພົວພັນຮ່ວມມືສາກົນ ໃຫ້ເປັນກໍາລັງແຮງຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ມີປະສິດທິຜົນ.

**ມາດຕາ 9: ຂົງເຂດການສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກໍາລຸ່ມກົດໝາຍ ແລະ ການຄຸ້ມຄອງບໍລິຫານລັດ**

1. ສ້າງ ແລະ ປັບປຸງແຜນຍຸດທະສາດ, ກົດໝາຍ, ນິຕິກໍາລຸ່ມກົດໝາຍໃຫ້ສໍາເລັດຕາມແຜນ ແລະ ໃຫ້ມີຄຸນນະພາບ ໃນນັ້ນລວມເຖິງ ຮ່າງນະໂຍບາຍ 3 ສະບັບ, ແຜນຍຸດທະສາດ 13 ສະບັບ, ກົດໝາຍ 17 ສະບັບ ແລະ ນິຕິກໍາລຸ່ມກົດໝາຍ 52 ສະບັບ.

2. ໂຄສະນາ, ເຜີຍແຜ່ ບັນດານະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍຢ່າງກ້ວາງຂວາງ ແລະ ທົ່ວເຖິງດ້ວຍຫຼາຍຮູບ, ຫຼາຍວິທີການ ເຮັດໃຫ້ປະຊາຊົນບັນດາເຜົ່າ ທຸກຊັ້ນຄົນໃນສັງຄົມຮັບຮູ້ ແລະ ເຂົ້າໃຈ ເພື່ອແນໃສ່ການຄຸ້ມຄອງລັດດ້ວຍກົດໝາຍ ໃຫ້ດີຂຶ້ນກວ່າເກົ່າ.

3. ເອົາໃຈໃສ່ວຽກງານກວດກາ ຢ່າງເປັນປົກກະຕິ, ແກ້ໄຂຜົນການກວດສອບ, ການກວດກາ ຢ່າງຕັ້ງໜ້າ ແລະ ເປັນຮູບປະທໍາຫຼາຍຂຶ້ນ ໂດຍມີມາດຕະການ ໃນການຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ແນໃສ່ຈໍາກັດ ແລະ ຫຼຸດຜ່ອນການລະເມີດວິໄນແຜນການ-ການເງິນ ໃຫ້ໄດ້ຢ່າງຂາດໂຕ.

4. ສືບຕໍ່ປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດເບົາບາງແຕ່ມີປະສິດທິຜົນ; ສືບຕໍ່ປັບປຸງ ແລະ ພັດທະນາລະບົບການຄຸ້ມຄອງ ແລະ ນໍາໃຊ້ລັດຖະກອນໃຫ້ມີປະສິດທິພາບ; ຍົກລະດັບຄວາມຮູ້ຄວາມສາມາດ ແລະ ປະສິດທິຜົນຂອງວຽກ; ພະຍາຍາມຫຼຸດຈໍານວນພະນັກງານລັດຖະກອນລົງເທື່ອລະກ້າວເພື່ອຫຼຸດຜ່ອນພາລະແບກຫາບຂອງງົບປະມານລັດ.

5. ປະຕິບັດກົດໝາຍ ແລະ ລະບຽບການຢ່າງເຄັ່ງຄັດ, ສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ຂອງການສວຍໃຊ້ສິດອໍານາດ ແລະ ການສໍ້ລາດບັງຫຼວງ ໃຫ້ເປັນຮູບປະທໍາ, ເຮັດໃຫ້ການບໍລິຫານລັດມີຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ; ສົ່ງເສີມໃຫ້ປະຊາຊົນມີສ່ວນຮ່ວມໃນການຕິດຕາມ, ກວດກາສົ່ງຂ່າວໃຫ້ການຈັດຕັ້ງທຸກຂັ້ນໃນການຕ້ານບັນດາສິ່ງຫຍໍ້ທໍ້ຕ່າງໆໃນສັງຄົມ; ປັບປຸງວຽກງານການຈັດຕັ້ງປະຕິບັດຄໍາຕັດສິນຂອງສານໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ ຕາມກົດໝາຍ ແລະ ຮັບປະກັນຄວາມຍຸຕິທໍາ ເພື່ອຊຸກຍູ້ການຄຸ້ມຄອງລັດບໍລິຫານໃຫ້ມີປະສິດທິຜົນສູງ.

6. ຄົ້ນຄວ້າ, ກວດກາ ນິຕິກໍາຕ່າງໆ ແລະ ປັບປຸງໃຫ້ຖືກຕ້ອງ, ສອດຄ່ອງ, ກົມກຽວ, ຈະແຈ້ງ, ກະທັດຮັດ ແລະ ມີປະສິດທິພາບສູງ ເພື່ອຮັບປະກັນໃຫ້ການຄຸ້ມຄອງຂອງຂະແໜງການ ແລະ ທ້ອງຖິ່ນ ມີປະສິດທິຜົນສູງຂຶ້ນ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາ.

7. ສືບຕໍ່ປະຕິບັດນະໂຍບາຍ ແລະ ຄໍາຂວັນ " ຮັກຊາດ ແລະ ພັດທະນາ " ໂດຍຖືເອົາປີ 2019 ເປັນປີປຸກລະດົມຂະບວນການ, ຊຸກຍູ້ໃຫ້ມີການແຂ່ງຂັນ ວຽກດີ-ຄົນເດັ່ນ ຫຼາຍຂຶ້ນ ພ້ອມທັງສ້າງກົນໄກຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ຟົດຟື້ນ ແລະ ມີໝາກມີຜົນ.

**ມາດຕາ 10: ການກະກຽມ ແລະ ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ**

ກະກຽມການສ້າງແຜນການ ແລະ ແຜນງົບປະມານ ແຫ່ງລັດ ປີ 2020, ສະຫຼຸບທ້າຍສະໄໝຂອງແຜນການ 5 ປີ ຄັ້ງທີ VIII ( 2016-2020). ພ້ອມທັງ ຄົ້ນຄວ້າ ແລະ ກະກຽມສ້າງແຜນ 5 ປີ ຄັ້ງທີ IX (2021-2025), ເພື່ອເປັນພື້ນຖານທາງດ້ານເນື້ອໃນ ໃຫ້ແກ່ບົດລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຂອງພັກ ຄັ້ງທີ XI.

## ໝວດທີ 3
## ການຈັດຕັ້ງປະຕິບັດ

**ມາດຕາ 11: ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ**

1. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບ ກະຊວງການເງິນ ຈັດຕັ້ງເຜີຍແຜ່ດຳລັດສະບັບນີ້ ເພື່ອສ້າງຄວາມເຂົ້າໃຈ ທີ່ເປັນເອກະພາບ ພ້ອມທັງແນະນຳ ກ່ຽວກັບວິທີການ ແລະ ຂັ້ນຕອນການຈັດຕັ້ງປະຕິບັດ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນ ແລະ ແຜນງົບປະມານ ແຫ່ງລັດ ປະຈຳປີ 2019 ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ທັງມີປະສິດທິຜົນສູງ.

2. ມອບໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຜັນຂະຫຍາຍແຜນ ແລະ ດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2019 ໃຫ້ເປັນແຜນພັດທະນາເສດຖະກິດ-ສັງຄົມ ແລະ ບົດແນະນຳການຈັດຕັ້ງປະຕິບັດຂອງຕົນ ໃຫ້ຄົບຖ້ວນ ແລະ ຊັດເຈນ ພາຍໃນເດືອນມັງກອນ ປີ 2019.

3. ໃຫ້ຄະນະພັກ-ຄະນະນຳບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນການລົງທຶນ ແລະ ແຜນງົບປະມານຂອງຕົນ ປະຈຳປີ 2019 ດ້ວຍຄວາມເອົາໃຈໃສ່ ແລະ ຮັບຜິດຊອບສູງ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ໃນການຈັດຕັ້ງປະຕິບັດ.

4. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ສະຫຼຸບລາຍງານຄວາມຄືບໜ້າ ແລະ ຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນການລົງທຶນ ແລະ ແຜນງົບປະມານຂອງຕົນ ໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຢ່າງເປັນທາງການ ໃນແຕ່ລະງວດ ຕາມປີປະຕິທິນ ຄື: ງວດທີ 1 ພາຍໃນວັນທີ 15 ເມສາ, ງວດທີ 2 ພາຍໃນວັນທີ 15 ກໍລະກົດ, ງວດທີ່ 3 ແລະ ຄາດຄະເນໝົດປີ ພາຍໃນວັນທີ່ 15 ຕຸລາ, ແລະ ງວດສຸດທ້າຍ ສະຫຼຸບໝົດປີ 2019 ພາຍໃນວັນທີ 15 ມັງກອນ 2020.

**ມາດຕາ 12: ການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ**

1. ນາຍົກລັດຖະມົນຕີ ອອກຂໍ້ຕົກລົງແຕ່ງຕັ້ງຄະນະຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກຈຸດສຸມຕົ້ນຕໍ ຂອງລັດຖະບານ ໂດຍມອບໃຫ້ບັນດາຮອງນາຍົກລັດຖະມົນຕີ ຫຼື ລັດຖະມົນຕີທີ່ກ່ຽວຂ້ອງເປັນຫົວໜ້າຄະນະ ເພື່ອລົງເລິກຊີ້ນຳໃນແຕ່ລະຂົງເຂດ ຫຼື ແຕ່ລະວຽກຈຸດສຸມ ພ້ອມທັງໃຫ້ສະຫລຸບລາຍງານຄວາມຄືບໜ້າ ແລະ ຜົນການຈັດຕັ້ງປະຕິບັດ ໃນທຸກໆ 3 ເດືອນ.

2. ມອບໃຫ້ບັນດາລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ປະທານ ຫລື ເລຂາຄະນະບໍລິຫານງານອົງການຈັດຕັ້ງມະຫາຊົນ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງ ແຕ່ງຕັ້ງຄະນະຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກຈຸດສຸມຂອງຂະແໜງການຕົນ, ໂດຍມອບໃຫ້ ຮອງ

ລັດຖະມົນຕີ, ຮອງຫົວໜ້າອົງການລັດທະບານກະຊວງ, ຮອງປະທານ ຫລື ຮອງເລຂາຄະນະບໍລິຫານງານອົງການຈັດຕັ້ງມະຫາຊົນ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ແລະ ຮອງເຈົ້າແຂວງ ເປັນຫົວໜ້າຄະນະ ເພື່ອລົງເລິກຊີ້ນໍາໃນແຕ່ລະຂົງເຂດວຽກຈຸດສຸມ ພ້ອມທັງໃຫ້ສະຫລຸບລາຍງານຄວາມຄືບໜ້າ ແລະ ຜົນການຈັດຕັ້ງປະຕິບັດ ໃນທຸກໆ 3 ເດືອນ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 13: ການຮັບຮູ້ ແລະ ປະຕິບັດ**

ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ປະທານ ຫລື ເລຂາຄະນະບໍລິຫານງານອົງການຈັດຕັ້ງມະຫາຊົນ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນສູງ.

**ມາດຕາ 14: ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນທີ 01 ມັງກອນ 2019 ເປັນຕົ້ນໄປ ແລະ ສິ້ນສຸດລົງໃນວັນທີ 31 ທັນວາ 2019.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ